**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງໄຊຍະບູລີ

ຫ້ອງການ ອຸດສາຫະກຳ ແລະ ການຄ້າ

ເລກທີ 93 /ຫອຄ.ຊຍ

ໄຊຍະບູລີ, ວັນທີ 12 ພຶດສະພາ 2022

# ແຈ້ງການ

**ເຖິງ:** ບັນດາຫົວໜ່ວຍທຸລະກິດ ສົ່ງເສີມ ກະສິກຳ ພາຍໃນເມືອງ ໄຊຍະບູລີ.

**ເລື່ອງ:** ການສະໝັກ ຂໍທຶນສົມທົບສຳລັບພັດທະນາທຸລະກິດກະສິກຳ ຈາກໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ).

- **ອີງຕາມ** ຂໍ້ຕົກລົງຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0**274** / ອຄ, ລົງວັນທີ **10** ມີນາ **2022**. ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ.
- **ອີງຕາມ** ແຜນດຳເນີນງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) ປີ 2022.

ຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງ ໄຊຍະບູລີ ໃນນາມ ຄູ່ຮ່ວມການຈັດຕັ້ງປະຕິບັດ ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) ໃນເມືອງ ໄຊຍະບູລີ ມີຈຸດປະສົງ ແຈ້ງມາຍັງບັນດາ ຫົວໜ່ວຍທຸລະກິດ ກ່ຽວການສົ່ງເສີມ ການຜະລິດ ກະສິກຳ ແລະ ປ່າໄມ້ ເປັນສິນຄ້າ ຊາບວ່າ: ໂຄງການ ມີກອງທຶນສົມທົບສຳລັບພັດທະນາທຸລະກິດ ກະສິກຳ ແມ່ນເປັນໜຶ່ງໃນບັນດາກົນໄກການຈັດຕັ້ງປະຕິບັດໂຄງການທີ່ມີເປົ້າໝາຍເພື່ອເຮັດໃຫ້ຕ່ອງໂສ້ມູນຄ່າ ເພື່ອ ເຮັດໃຫ້ ກຸ່ມ ຜູ້ດຳເນີນກິດຈະກຳ ທີ່ໂຄງການສະໜັບສະໜູນ ສາມາດເຂົ້າເຖິງ ຕະຫຼາດ ທີ່ດີກວ່າເກົ່າ ແລະ ປັບປຸງການເຂົ້າເຖິງການບໍລິການຂອງທຸລະກິດ, ໂດຍຜ່ານ ຫົວໜ່ວຍທຸລະກິດ ດັ່ງກ່າວ, ໂດຍໂຄງການຈະໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນແກ່ຫົວໜ່ວຍທຸລະກິດກະສິກຳ ທີ່ມີຄວາມສົນໃຈ ແລະ ສະມັກເຂົ້າຮ່ວມຄັດເລືອກ ຂໍທຶນສະໜັບສະໜູນ ຂອງໂຄງການ

ບັນດາຫົວໜ່ວຍທຸລະກິດທີ່ມີຄວາມສົນໃຈສະໝັກຂໍທຶນ ແມ່ນສາມາດພົວພັນ ແລະ ຂໍຂໍ້ມູນລາຍລະອຽດກ່ຽວກັບຂັ້ນຕອນ ແລະ ເງື່ອນໄຂການສະໝັກຂໍທຶນໄດ້ທີ່ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ໄຊຍະບູລີ, ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ໄຊຍະບູລີ (ຫ້ອງການປະສານງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ).

❖ ສຳລັບຂັ້ນເມືອງແມ່ນປ່ອຍທຶນສົມທົບຫົວໜ່ວຍທຸລະກິດຂະໜາດຄົວເຮືອນ ແລະ ຂະໜາດນ້ອຍ.

**ເງື່ອນໄຂຫົວໜ່ວຍທຸລະກິດກະສິກຳມີດັ່ງນີ້:**

1. ມີຄວາມສົນໃຈຢາກເຮັດວຽກຮ່ວມກັບໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ).
2. ຫົວໜ່ວຍທຸລະກິດມີການຈົດທະບຽນທີ່ຖືກຕ້ອງຕາມກົດໝາຍ.
3. ຫົວໜ່ວຍທຸລະກິດທີ່ມີໃບແຈ້ງເສຍອາກອນ ແລະ ໃບຢັ້ງຢືນການເສຍອາກອນ.
4. ຫົວໜ່ວຍທຸລະກິດມີການດຳເນີນກິດຈະການຫຼາຍກວ່າ 3 ປີ.
5. ຫົວໜ່ວຍທຸລະກິດມີຄວາມສາມາດ, ປະສົບການໃນການສົ່ງເສີມທຸລະກິດກະສິກຳ ແລະ ການເຊື່ອມໂຍງກັບຊາວກະສິກອນສູ່ຕະຫຼາດ (ການເຊັນສັນຍາເກັບຊື້ການຜະລິດ).
6. ສຳລັບທຶນສົມທົບຂະໜາດນ້ອຍ ຖ້າຫົວໜ່ວຍຄົວເຮືອນໃດທີ່ມີຄວາມຕ້ອງການລິເລີ່ມທຸລະກິດໂດຍສະເພາະສະມາຊິກກຸ່ມຜະລິດແມ່ນສາມາດສະໝັກໄດ້ໂດຍເຂົ້າໄປປຶກສາຫາລືກັບທີມງານ ຫຼື ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ.
7. ໄລຍະເວລາປະກາດ **14** ວັນ, ເລີ່ມແຕ່ວັນທີ **12** - 24 ພຶດສະພາ 2022.

**ດັ່ງນັ້ນ**, ຈຶ່ງໄດ້ອອກແຈ້ງການສະບັບນີ້ເຖິງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມໂຄງການ.

**ຫົວໜ້າ**

**ຫ້ອງການອຸດສາຫະກຳ ແລະ ການຄ້າ**

ສົ່ງປອນ ອຸ່ນຊານຸວົງ

**+ ຕິດຕໍ່ປະສານງານ**

- **ຜູ້ປະສານງານໂຄງການຂັ້ນເມືອງ**

  **ໂທ 020 5598 9409**

- **ຫ້ອງການອຸດສາຫະກຳ ແລະ ການຄ້າ**

  **ໂທ 020 5599 5034**